ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມທາງນ້ຳ

ເລກທີ: 06634 /ຍທຂ.ກທນ

ລົງວັນທີ: 1. 4. 2019

# ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ ລະຫວ່າງ ກົມທາງນ້ຳ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ

| ກົມທາງນ້ຳຮັບຜິດຊອບ | ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຮັບຜິດຊອບ |
|---|---|
| 1. ຄົ້ນຄວ້າ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບ ວຽກງານທາງນ້ຳ ໃຫ້ລະອຽດເລິກເຊິ່ງ; | 1. ຜັນຂະຫຍາຍກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງ, ລະບຽບການ, ມາດຕະຖານເຕັກນິກ ແລະ ນຳໃຊ້ສູດຄິດໄລ່ ລາຄາຫົວໜ່ວຍ ວຽກທາງນ້ຳຂອງ ກະຊວງ ຍທຂ; |
| 2. ສ້າງແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດໃນແຕ່ລະໄລຍະ ແລະ ຊີ້ນຳການຈັດຕັ້ງປະຕິບັດ ກ່ຽວກັບວຽກງານທາງນ້ຳ ເພື່ອນຳສະເໜີຕໍ່ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງ; | 2. ຄົ້ນຄ້ວາສ້າງແຜນການພັດທະນາວຽກງານທາງນ້ຳ ໄລຍະສັ້ນ, ກາງ ແລະ ໄລຍະຍາວ ໃນຂອບເຂດແຂວງ ແລະ ນະຄອນຫຼວງວຽງຈັນ ນັບທັງເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ ກວດກາການ ຈັດຕັ້ງປະຕິບັດບັນດາໂຄງການເຫຼົ່ານັ້ນ; |
| 3. ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກໍຄືຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານທາງນ້ຳ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງ; ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫຼື ເຈລະຈາ ສຳລັບໂຄງການຍຸດທະສາດລະດັບຊາດ ທີ່ກົມທາງນ້ຳ ຫຼື ກະຊວງ ຍທຂ ຊອກຫາແຫຼ່ງທຶນໄດ້ດ້ວຍຕົນເອງ, ສ່ວນການຈັດຕັ້ງປະຕິບັດ ກົມທາງນ້ຳ, ກະຊວງ ຍທຂ ສາມາດມອບໃຫ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຕາມຄວາມເໝາະສົມ; | 3. ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫຼືເຈລະຈາ ແລະ ຈັດຕັ້ງປະຕິບັດທຸກໂຄງການກໍ່ສ້າງທາງນ້ຳ ທີ່ເປັນຍຸດທະສາດຂອງແຂວງ ແລະ ນະຄອນຫລວງວຽງຈັນ ທີ່ສາມາດຊອກຫາແຫຼ່ງທຶນມາໄດ້ ຫຼື ຕາມການມອບໝາຍຂອງ ກະຊວງ ຍທຂ; |
| 4. ຄົ້ນຄວ້າ ຮ່າງນະໂຍບາຍ, ກົດໝາຍ, ລະບຽບການ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ກ່ຽວກັບ ວຽກງານທາງນ້ຳ ອອກໃບຢັ້ງຢືນຮັບຮອງເອົາແບບເຕັກນິກ ແລະ ມູນຄ່າການກໍ່ສ້າງຂອງບັນດາໂຄງການກໍ່ສ້າງກິດຈະການທາງນ້ຳໃນຂອບເຂດທົ່ວປະເທດ; | 4. ອອກໃບຢັ້ງຢືນຮັບຮອງເອົາແບບ ແລະ ມູນຄ່າການກໍ່ສ້າງຂອງບັນດາໂຄງການກໍ່ສ້າງກິດຈະການ ທາງນ້ຳ ໂດຍຖືກຕ້ອງຕາມລະບຽບການ, ມາດຕະຖານເຕັກນິກ ແລະ ສູດຄິດໄລ່ລາຄາຫົວໜ່ວຍ ຂອງກະຊວງ ຍທຂ; |

| | |
|---|---|
| 5. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທາງນ້ຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ເພື່ອກໍ່ສ້າງ, ບຳລຸງ ແລະ ຍົກລະດັບພະນັກງານ-ລັດຖະກອນ ພ້ອມທັງຍາດແຍ່ງ ການຊ່ວຍເຫຼືອລ້າ ແລະ ກູ້ຢືມ ເຂົ້າໃນການພັດທະນາ; | 5. ກວດເອກະສານການອອກແບບດ້ານເຕັກນິກ, ປະສິດທິຜົນການລົງທຶນ ແລະ ເອກະສານອື່ນໆທີ່ພົວພັນກັບໂຄງການ ແລ້ວລາຍງານຂໍອະນຸມັດຈາກຂັ້ນເທິງ; |
| 6. ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ ທີ່ລັດຖະບານອະນຸມັດ ໃຫ້ມີປະສິດທິຜົນສູງ; ຂຸດຄົ້ນ, ຄຸ້ມຄອງ ແລະ ນຳໃຊ້ລາຍຮັບວິຊາການຕາມການອະນຸມັດຂອງລັດຖະມົນຕີ; | 6. ຄຸ້ມຄອງການຂຸດຄົ້ນຫີນແຮ່-ຊາຍ ໃນຂອບເຂດແຂວງ ແລະ ນະຄອນຫຼວງວຽງຈັນ ຂອງຕົນ; |
| 7. ຄຸ້ມຄອງ, ຕິດຕາມກວດກາ ແລະ ກວດການ ການເຄື່ອນໄຫວ ຂອງບັນດາພະແນກ, ຫ້ອງການ, ໂຄງການທີ່ຂຶ້ນກັບກົມ; ກວດກາ, ປະເມີນຜົນ, ຊຸກຍູ້ ແລະ ຊ່ວຍໜູນ ຂະແໜງ ສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ແລະ ຫົວໜ່ວຍທຸລະກິດ ໃນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ ໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນດີ; | 7. ອອກໃບອະນຸຍາດການຂຸດຄົ້ນຫີນແຮ່, ຊາຍ ຕາມແມ່ນ້ຳຂອງ, ແມ່ນ້ຳຕ່າງໆ ມີເນື້ອທີ່ຫຼາຍກ່ວາ 1 ຫາ 5 ເຮັກຕາ; |
| 8. ເກັບກຳ ແລະ ສ້າງຖານຂໍ້ມູນ ທາງດ້ານສະຖິຕິ ແລະ ຂ່າວສານ ເພື່ອຄຸ້ມຄອງ ແລະ ນຳໃຊ້ເຂົ້າໃນການ ວາງແຜນ ແລະ ພັດທະນາຂະແໜງຕົນ; | 8. ອອກທະບຽນເຮືອໂດຍສານຂະໜາດ 101 ບ່ອນນັ່ງຂຶ້ນໄປ, ເຮືອບັນທຸກສິນຄ້າຂະໜາດ 301 ໂຕນຂຶ້ນໄປ, ເຮືອແພຮ້ານອາຫານ 101 ຄົນຂຶ້ນໄປ, ເຮືອບັກລະຫວ່າງປະເທດ, ເຮືອບັກບັນທຸກລົດໃຫຍ່, ເຮືອຂຸດຄົ້ນຊັບພະຍາກອນ ແລະ ເຮືອກໍ່ສ້າງຂະໜາດໃຫຍ່, ເຮືອກິລາເຄື່ອງຈັກ 5 ແຮງມ້າຂຶ້ນໄປ, ອອກໃບອະນຸຍາດດຳເນີນທຸລະກິດຂົນສົ່ງທາງນ້ຳ. |
| 9. ຄຸ້ມຄອງ, ປັບປຸງ ແລະ ສົ່ງເສີມ ການຂົນສົ່ງທາງນ້ຳ ແລະ ທາງທະເລ ພ້ອມທັງອອກໃບອະນຸຍາດ ການ ຂົນສົ່ງທາງນ້ຳ ລະຫວ່າງຊາດ ແລະ ທາງທະເລ; | 9. ຄຸ້ມຄອງການຂົນສົ່ງທາງນ້ຳ ລະຫວ່າງແຂວງກັບແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ລະຫວ່າງປະເທດ ທີ່ມີຊາຍ ແດນຕິດກັບແຂວງ ແລະ ນະຄອນຫຼວງວຽງຈັນ; |
| 10. ຄຸ້ມຄອງກິດຈະການກໍ່ສ້າງທາງນ້ຳ, ບູລະນະຮັກສາ ແລະ ສ້ອມແປງ ສິ່ງປ້ອງກັນຕະຝັ່ງ, ຄັນຄູປ້ອງກັນນ້ຳຖ້ວມ ຕົວເມືອງ, ທ່າເຮືອ, ປັບປຸງຄອງເດີນເຮືອ ແລະ ເຂດສະຫງວນ ຕາມແມ່ນ້ຳຂອງ ແລະ ແມ່ນ້ຳຕ່າງໆ; | 10. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ກະຊວງ ຍທຂ ເປັນ ປະຈຳເດືອນ, ງວດ ແລະ ປະຈຳປີ; |

| | |
|---|---|
| 11. ຄຸ້ມຄອງຫີນແຮ່, ຊາຍ ຕາມແມ່ນ້ຳ ທີ່ພົວພັນກັບການດຳເນີນກິດຈະການຕ່າງໆ ແລະ ໂຄງການສ້າງແມ່ນ້ຳຂອງ, ຕະຝັ່ງເຈື່ອນ, ຄອງເດີນເຮືອ, ທ່າເຮືອ ແລະ ການຮ່ວມມືລາວ-ໄທ ກ່ຽວກັບການປ້ອງກັນຜົນກະທົບຕໍ່ຕາຝັ່ງ, ລະບົບນິເວດວິທະຍາຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ. ສຳຫຼວດ, ຄຸ້ມຄອງແຫຼ່ງວັດສະດຸກໍ່ສ້າງ ເປັນຕົ້ນ ບໍ່ດິນດຳ, ດິນແດງ, ຫີນ, ຫີນແຮ່, ຊາຍ, ຫີນໝາມໜີ່, ຫີນບາຊານ, ຫີນປູນ ແລະ ຫີນກໍ່ສ້າງອື່ນໆທີ່ບໍ່ມີແຮ່ທາດ ໂດຍໄດ້ຮັບການຢັ້ງຢືນຈາກກະຊວງພະລັງງານ ແລະ ບໍ່ແຮ່ ແລະ ໄດ້ຮັບການອະນຸມັດຈາກລັດຖະບານ; | 11. ຄຸ້ມຄອງຫີນແຮ່,ຊາຍ ຕາມແມ່ນ້ຳ ທີ່ພົວພັນກັບການດຳເນີນກິດຈະການຕ່າງໆ ແລະໂຄງການກໍ່ສ້າງຕາມແມ່ນ້ຳຂອງ, ຕະຝັ່ງເຈື່ອນ, ຄອງເດີນເຮືອ, ທ່າເຮືອ ແລະ ການຮ່ວມມືລາວ-ໄທ ກ່ຽວກັບການປ້ອງກັນຜົນກະທົບຕໍ່ຕະຝັ່ງ , ລະບົບນິເວດວິທະຍາຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ. ສຳຫຼວດ,ຄຸ້ມຄອງແຫຼ່ງວັດສະດຸກໍ່ສ້າງ ເປັນຕົ້ນ ບໍ່ດິນດຳ, ດິນແດງ, ຫີນ, ຫີນແຮ່, ຊາຍ, ຫີນໝາມ ໜີ່, ຫີນບາຊານ, ຫີນປູນ ແລະ ຫີນກໍ່ສ້າງອື່ນໆທີ່ບໍ່ມີແຮ່ທາດ ໂດຍໄດ້ຮັບການຢັ້ງຢືນ ຈາກກະຊວງພະລັງງານ ແລະ ບໍ່ແຮ່ ແລະ ໄດ້ຮັບການອະນຸມັດຈາກລັດຖະບານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; |
| 12. ຂຶ້ນແຜນກຳນົດ, ບຳລຸງ, ກໍ່ສ້າງ, ສັບຊ້ອນ, ຄຸ້ມຄອງ, ສຶກສາອົບຮົມ ແລະ ສະເໜີ ປະຕິບັດນະໂຍບາຍ ຕໍ່ພະນັກງານ ໃນຂະແໜງຕົນໃຫ້ຖືກຕ້ອງຕາມແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ; | 12. ຄຸ້ມຄອງການກໍ່ສ້າງ ແລະ ສ້ອມແປງສິ່ງປ້ອງກັນຕະຝັ່ງ, ຄັນຄູປ້ອງກັນນ້ຳຖ້ວມໃນຕົວເມືອງ, ເຂດສະຫງວນຕາມແມ່ນ້ຳຂອງ ແລະ ແມ່ນ້ຳຕ່າງໆ; |
| 13. ຄົ້ນຄວ້າ, ສົ່ງເສີມ ຫົວຄິດປະດິດສ້າງ ແລະ ນຳໃຊ້ຄວາມກ້າວໜ້າ ທາງດ້ານເຕັກນິກວິຊາການ ແລະ ເຕັກໂນໂລຊີທີ່ເໝາະສົມ ເຂົ້າໃນຂະແໜງຕົນ; | 13. ຄຸ້ມຄອງຕິດຕາມການສຳຫຼວດ-ອອກແບບ, ກວດກາເຕັກນິກ ແລະ ປະເມີນມູນຄ່າໂຄງການ; |
| 14. ຄົ້ນຄວ້າ ແລະ ປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບການລົງທຶນ, ການສ້າງຕັ້ງ ແລະ ການສືບຕໍ່ ຫຼື ຫຍຸບເລີກຫົວໜ່ວຍວິຊາການ ແລະ ຫົວໜ່ວຍທຸລະກິດທີ່ຂຶ້ນກັບຂະແໜງຕົນ; | 14. ສະເໜີຕັດອອກ ເພາະມີເນື້ອໃນຊ້ຳກັບຂໍ້ທີ 3. |
| 15. ສະຫຼຸບ, ຕີລາຄາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນການ ແລະ ງົບປະມານ ກ່ຽວກັບວຽກງານທາງນ້ຳ; | 15. ສະເໜີຕັດ ເພາະມີເນື້ອໃນຊ້ຳກັບຂໍ້ທີ 1. |
| 16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນຳ, ຕາມກົດໝາຍ ແລະ ລະບຽບການກຳນົດ; | 16. ຄຸ້ມຄອງຕິດຕາມກວດກາ, ການອອກໃບອານຸຍາດການຂຸດຄົ້ນຫີນ, ແຮ່ຊາຍຕາມແມ່ນ້ຳຂອງ ແລະ ແມ່ນ້ຳຕ່າງໆ. |
| 17. ອອກໃບອະນຸຍາດການຂຸດຄົ້ນຫີນແຮ່, ຊາຍ ຕາມແມ່ນ້ຳຂອງ, ແມ່ນ້ຳຕ່າງໆ ມີເນື້ອທີ່ຫຼາຍກ່ວາ 5 ເຮັກຕາຂຶ້ນໄປ; | |

| | |
|---|---|
| 18. ສະເໜີຕັດອອກ ເພາະວຽກດັ່ງກ່າວແມ່ນມອບໃຫ້ ພະແນກ ຍທຂ ແຂວງ/ນະຄອນຫຼວງ ຕາມບົດບັນທຶກການແບ່ງຄວາມຮັບຜິດຊອບ ເພື່ອຈັດຕັ້ງປະຕິບັດເຮັດທົດລອງ ສາມສ້າງທີ່ແຂວງອັດຕະປື ຄັ້ງວັນທີ 7/12/2012 | |
| 19. ຄົ້ນຄ້ວາລະບຽບການ, ການນຳໃຊ້ດິນດຳ, ດິນແດງ, ຫີນ, ແຮ່-ຊາຍ, ຫີນໝາມໜໍ່, ຫີນບຸຊານ, ຫີນປູນ ແລະ ຫີນກໍ່ສ້າງອື່ນໆ; | |
| 20. ສະເໜີຕັດອອກ ເພາະວ່າເນື້ອໃນດັ່ງກ່າວ ແມ່ນມີໃນຂໍ້ທີ 10 ແລ້ວ. | |
| 21. ຄຸ້ມຄອງການສຳຫຼວດ-ອອກແບບ, ກວດກາເຕັກນິກ ແລະ ລາຄາຫົວໜ່ວຍ ໂຄງການກໍ່ສ້າງ ແລະ ສ້ອມແປງທາງນ້ຳ; | |
| 22. ຄຸ້ມຄອງການຈັດຊື້-ຈັດຈ້າງ ບັນດາໂຄງການປ້ອງກັນຕາຝັ່ງ ແລະ ປ້ອງກັນນ້ຳຖ້ວມ, ທ່າເຮືອ, ປັບປຸງຄອງເດີນເຮືອ ແລະ ຕິດຕັ້ງເຄື່ອງໝາຍການເດີນເຮືອ; | |
| 23.ເຜີຍແຜ່ກົດໝາຍ ລະບຽບການຂໍ້ກຳນົດ, ກຳນົດໝາຍ, ມາດຕະຖານເຕັກນິກ, ລາຄາຫົວໜ່ວຍ, ຄຳແນະນຳ ແລະ ຄູ່ມື; | |
| 24. ຄຸ້ມຄອງຕິດຕາມກວດກາ ແລະ ການອອກໃບອະນຸຍາດຂຸດຄົ້ນຫີນ, ແຮ່ຊາຍ ຕາມແມ່ນ້ຳຂອງ ແລະ ແມ່ນ້ຳຕ່າງໆ ທີ່ພະແນກ ຍທຂ ອອກໃຫ້. | |

ຫົວໜ້າກົມທາງນ້ຳ

ຮຸ່ງຫຼ້າ ແສງເມືອງ

ຫົວໜ້າພະແນກ

ຫົວໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ: ..............................

ຫົວໜ້າພະແນກ ຍທຂ ແຂວງ ຜົ້ງສາລີ : ..............................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງນໍ້າທາ : ....................................

ຫົວໜ້າພະແນກ ຍທຂ ແຂວງ ອຸດົມໄຊ : ....................................

ຫົວໜ້າພະແນກ ຍທຂ ແຂວງ ບໍ່ແກ້ວ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງພະບາງ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຊຽງຂວາງ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫົວພັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ໄຊຍະບູລີ : ....................................

ຫົວໜ້າພະແນກ ຍທຂ ແຂວງ ວຽງຈັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ໄຊສົມບູນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ບໍລິຄໍາໄຊ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຄໍາມ່ວນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ສະຫວັນນະເຂດ: ....................................

ຫົວໜ້າພະແນກ ຍທຂ ແຂວງ ຈຳປາສັກ : ..............................

ຫົວໜ້າພະແນກ ຍທຂ ແຂວງ ສາລະວັນ : ..............................

ຫົວໜ້າພະແນກ ຍທຂ ແຂວງ ເຊກອງ : ..............................

ຫົວໜ້າພະແນກ ຍທຂ ແຂວງອັດຕະປື : ..............................